**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

----------------

**ລັດຖະບານ** ເລກທີ 11 /ລບ

ນະຄອນຫຼວງວຽງຈັນ, ວັນທີ 22.09.2017

# ມະຕິຕົກລົງ
## ກອງປະຊຸມລັດຖະບານ ເປີດກວ້າງ ຄັ້ງທີ I ປີ 2017

ກອງປະຊຸມລັດຖະບານເປີດກວ້າງ ຄັ້ງທີ I ປີ 2017 ໄດ້ດຳເນີນແຕ່ວັນທີ 07 ຫາ 08 ກັນຍາ 2017 ທີ່ຫໍປະຊຸມແຫ່ງຊາດ ພາຍໃຕ້ການເປັນປະທານຂອງ ທ່ານ ທອງລຸນ ສີສຸລິດ, ນາຍົກລັດຖະມົນຕີ ໂດຍມີສະມາຊິກລັດຖະບານ, ເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາເຈົ້າແຂວງ, ຕາງໜ້າສະມາຊິກລັດຖະບານ ແລະ ແຂກຖືກເຊີນເຂົ້າຮ່ວມ ທັງໝົດຈຳນວນ 62 ທ່ານ. ກອງປະຊຸມໄດ້ຮັບຟັງລາຍງານ, ປຶກສາຫາລື, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນ ດັ່ງນີ້:

I. **ກອງປະຊຸມໄດ້ຮັບຟັງລາຍງານ ກ່ຽວກັບການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ 6 ເດືອນຕົ້ນປີ, ຄາດຄະເນໝົດປີ 2017 ແລະ ທິດທາງແຜນການສຳລັບປີ 2018,** ຊຶ່ງສະເໜີໂດຍທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ; ທ່ານ ສຸພັນ ແກ້ວມີໄຊ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ແລະ ທ່ານ ສົມພາວ ໄຟສິດ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ.

1) **ກ່ຽວກັບການການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ,ແຜນງົບປະມານ ແລະ ແຜນເງິນຕາ 6 ເດືອນຕົ້ນປີ, ຄາດຄະເນໝົດປີ 2017**:

ກອງປະຊຸມຕີລາຄາວ່າ: ໃນໄລຍະ 6 ເດືອນຕົ້ນປີ ສະພາບເສດຖະກິດໂລກ ແລະ ພາກພື້ນຍັງສືບຕໍ່ຂະຫຍາຍຕົວຊັກຊ້າ ແລະ ບໍ່ແນ່ນອນ ຈຶ່ງບໍ່ເອື້ອອຳນວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຢູ່ປະເທດເຮົາເທົ່າທີ່ຄວນ ໂດຍສະເພາະບັນດາປະເທດທີ່ເປັນຄູ່ການຄ້າ (ສສ ຫວຽດນາມ, ສປ ຈີນ, ຣາຊະອານາຈັກໄທ ແລະ ສະຫະພາບເອີຣົບ), ອີກສາເຫດໜຶ່ງ ກໍຍ້ອນບັນຫາການເມືອງຂອງໂລກຍັງປະເຊີນໜ້າກັບຂໍ້ຂັດແຍ່ງດ້ານຕ່າງໆ, ບັນຫາໄພພິບັດທາງທຳມະຊາດ ແລະ ອື່ນໆ. ໃນຂະນະດຽວກັນ ລັດຖະບານກໍຍັງຢູ່ໃນຊ່ວງສືບຕໍ່ແກ້ໄຂຄວາມຫຍຸ້ງຍາກ ຈາກບັນດາສົກປີກ່ອນໜ້າ ແລະ ເປັນປີເລີ່ມຕົ້ນຈັດຕັ້ງປະຕິບັດງົບປະມານຕາມປີປະຕິທິນ, ຊຶ່ງການປະຕິບັດນິຕິກຳຕ່າງໆ ຕາມກົນໄກໃໝ່ ກໍຍັງບໍ່ທັນຄ່ອງຕົວເທື່ອ.

ເຖິງຢ່າງໃດກໍຕາມ, ລັດຖະບານມີຄວາມພະຍາຍາມສູງ ໃນການປະຕິບັດບັນດາຄາດໝາຍ ແລະ ເຂັ້ມງວດປະຕິບັດກົນໄກ-ມາດຕະການຕ່າງໆ ເພື່ອສ້າງເງື່ອນໄຂ ແລະ ສິ່ງອຳນວຍ ເຮັດໃຫ້ ພາກທຸລະກິດສືບຕໍ່ຂະຫຍາຍຕົວ, ຊຶ່ງໂດຍລວມແລ້ວລັດຖະບານຍັງສືບຕໍ່ຮັກສາສະຖຽນລະພາບ ທາງດ້ານການເມືອງ, ມີຄວາມສະຫງົບ ແລະ ຄວາມປອດໄພທາງສັງຄົມ; ການຈັດຕັ້ງປະຕິບັດບັນດາຄາດໝາຍໃຫຍ່ດ້ານເສດຖະກິດໃນ 6 ເດືອນຕົ້ນປີ ຍັງສືບຕໍ່ຂະຫຍາຍຕົວທຽບໃສ່ປີຜ່ານມາ (ຄາດຄະເນໝົດປີ GDP ຈະເຕີບໂຕໃນລະດັບ 6,83% ທຽບໃສ່ແຜນການທີ່ສະພາຮັບຮອງຍັງຫຼຸດ 0,17% ຕາມແຜນແມ່ນ 7%, ສະເລ່ຍຕໍ່ຫົວຄົນເທົ່າກັບ 2.472 ໂດລາ ສຫລ), ໃນນັ້ນ:

- ຂະແໜງກະສິກຳ ປະຕິບັດໄດ້ 2,78% ກວມເອົາ 16,34% ຂອງ GDP ທຽບໃສ່ແຜນການປີ 3,1% ຫຼຸດແຜນ 0,32%; ຂະແໜງອຸດສາຫະກຳ ເພີ່ມຂຶ້ນ 9,53% ກວມ 30% ຂອງ GDP ທຽບໃສ່ແຜນການ 8,9% ລື່ນແຜນ 0,63%; ຂະແໜງບໍລິການ ປະຕິບັດໄດ້ 6,15% ກວມ 42,08% ຂອງ